# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ

# Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 5

## ການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ມວນຊົນ

## Media advertising

### 1. ຄວາມໝາຍ, ຄວາມສຳຄັນ ແລະ ຈຸດປະສົງ

### 1.1. ຄວາມໝາຍ

ການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ມວນຊົນ ແມ່ນການນຳເອົາ ຂໍ້ມູນຂ່າວສານທາງດ້ານກົດໝາຍບັນຈຸເຂົ້າໃນສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ ເພື່ອເຮັດໃຫ້ພົນລະເມືອງ ສາມາດເຂົ້າເຖິງກົດໝາຍໄດ້ງ່າຍ, ສະດວກ ແລະ ວ່ອງໄວ.

### 1.2. ຄວາມສຳຄັນ

ສື່ມວນຊົນເປັນພາຫະນະໂຄສະນາເຜີຍແຜ່ກົດໝາຍທີ່ມີປະສິດທິຜົນສູງ, ເປັນກະບອກສຽງຂອງອົງການຈັດຕັ້ງພັກ, ລັດ ແລະ ສັງຄົມໃນການໂຄສະນາ, ສຶກສາອົບຮົມແນວທາງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດໃຫ້ແກ່ສັງຄົມໄດ້ຮັບຮູ້, ເຂົ້າໃຈ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ; ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນ ສັງຄົມ ແລະ ຖ້ອຍທຳນອງທີ່ບິດເບືອນຄວາມເປັນຈິງ;ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃນສັງຄົມ.

### 1.3. ຈຸດປະສົງ

ຈຸດປະສົງຂອງການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ມວນຊົນ ແມ່ນເພື່ອໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້, ມີຄວາມເຂົ້າໃຈກົດໝາຍ ແລະ ລະບຽບການຕ່າງໆທີ່ລັດປະກາດໃຊ້ໃນແຕ່ລະໄລຍະ ແລະ ນຳໄປສູ່ການປະຕິບັດກົດໝາຍຢ່າງເຂັ້ມງວດ.

### 2. ທັກສະການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ມວນຊົນ

ການໂຄສະນາເຜີຍແຜ່ກົດໝາຍທາງສື່ມວນຊົນແຕ່ລະປະເພດ ແມ່ນຕ້ອງໃຊ້ທັກສະ, ເຕັກນິກ, ວິທີການ ແລະ ພອນສະຫວັນສະເພາະຕາມຮູບແບບ, ລັກສະນະ ແລະ ຈຸດພິເສດສະເພາະຂອງສື່ແຕ່ລະປະເພດ ເປັນຕົ້ນ ວາລະສານ, ໜັງສືພິມ, ໂທລະໂຄ່ງ, ວິທະຍຸ, ໂທລະພາບ, ແລະ ສື່ແບບໃໝ່ ຫຼື ລາຍການອິນເຕີເນັດປະເພດຕ່າງໆ ຊຶ່ງກະຈາຍອອກຜ່ານເຄື່ອງສົ່ງທາງສາຍ, ທາງອາກາດ ຫຼື ຄື້ນຄວາມຖີ່.

**2.1. ການໂຄສະນາເຜີຍແຜ່ກົດໝາຍຜ່ານສື່ສິ່ງພິມ**

ການເຜີຍແຜ່, ສຶກສາອົບຮົມກົດໝາຍຜ່ານສື່ສິ່ງພິມ ເປັນຂະບວນການທີ່ມີຈຸດປະສົງ, ມີແຜນການ, ໂດຍຜ່ານພາຫະນະສື່ສິ່ງພິມແນໃສ່ຖ່າຍທອດຄວາມຮູ້, ເຫດການ ແລະ ການກະທຳທີ່ສອດຄ່ອງກັບກົດໝາຍທີ່ມີ ຜົນບັງຄັບໃຊ້ໃນແຕ່ລະໄລຍະ.

ເພື່ອເສີມຂະຫຍາຍແນວທາງ, ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການ ຂອງລັດໃຫ້ເຂົ້າສູ່ຊີວິດຕົວຈິງຂອງສັງຄົມ ທັງລວງກວ້າງ ແລະ ລວງເລິກ, ການໂຄສະນາເຜີຍແຜ່ນິຕິກຳ ໂດຍຜ່ານ ໜັງສືພິມ, ວາລະສານແມ່ນໜຶ່ງໃນຮູບການເຜີຍແຜ່, ສຶກສາອົບຮົມກົດໝາຍໃຫ້ເຂົ້າສູ່ຊີວິດຕົວຈິງຂອງສັງຄົມ ຊຶ່ງມີເປົ້າໝາຍກະທົບໂດຍກົງຕໍ່ພົນລະເມືອງຊັ້ນຄົນຕ່າງໆຢູ່ໃນສັງຄົມ ຢູ່ໃນເຂດຕົວເມືອງຫາເຂດຊານເມືອງ; ຮູບການທາງໜັງສືພິມ, ວາລະສານ ຍັງມີລັກສະນະແຄບກວ່າ ເພາະໜັງສືພິມ ແລະ ວາລະສານ ຍັງບໍ່ທັນເຂົ້າເຖິງທຸກ ເປົ້າໝາຍ ໂດຍສະເພາະແມ່ນເຂດຊົນນະບົດ, ຜູ້ທີ່ບໍ່ຮູ້ໜັງສື, ພິການທາງສາຍຕາ...

**2.2. ການໂຄສະນາເຜີຍແຜ່ກົດໝາຍຜ່ານທາງວິທະຍຸກະຈາຍສຽງ**

ການໂຄສະນາເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການແລະແຈ້ງຂ່າວການເຄື່ອນໄຫວວຽກງານຕ່າງໆທັງພາຍໃນແລະຕ່າງປະເທດຜ່ານທາງວິທະຍຸກະຈາຍສຽງແມ່ນຖືເປັນປາກກະບອກສຽງຂອງພັກ, ລັດທີ່ຖືກຕ້ອງ;

ເປັນເວທີສະແດງຄຳຄິດເຫັນ, ປະກອບສ່ວນໃນການສ້າງ, ປັບປຸງແລະແກ້ໄຂກົດໝາຍທີ່ເຫັນວ່າບໍ່ສອດຄ່ອງກັບສະພາບການຕົວຈິງຂອງປະຊາຊົນບັນດາເຜົ່າໂດຍຜ່ານທາງວິທະຍຸກະຈາຍສຽງເປັນສື່ກາງຫຼືເປັນຂົວຕໍ່ລະຫວ່າງພັກ, ລັດກັບປະຊາຊົນ[1].

**2.3. ການໂຄສະນາເຜີຍແຜ່ກົດໝາຍທາງໂທລະພາບ**

ການໂຄສະນາເຜີຍແຜ່ກົດໝາຍທາງໂທລະພາບກໍເປັນອີກຮູບການໜຶ່ງທີ່ໄດ້ຮັບຄວາມນິຍົມຊົມຊອບ ຊຶ່ງມີລັກສະນະ, ຈຸດພິເສດສະເພາະ.

ນັກຂ່າວເກັບກຳຂໍ້ມູນດ້ວຍສາມວິທີຕົ້ນຕໍ:

- **ການສັງເກດ**

ທ່ານຈະບໍ່ໄດ້ຢູ່ໃນເຫດການສະເໝີໄປ, ສະນັ້ນທ່ານຕ້ອງສຳພາດບຸກຄົນທີ່ຢູ່ໃນເຫດການຫຼືເຫັນເຫດການນັ້ນ, ແຕ່ໃນການເຮັດຂ່າວຫຼາຍປະເພດທ່ານອາດຈະສັງເກດດ້ວຍຕົນເອງ, ຕົວຢ່າງ: ກອງປະຊຸມຖະແຫຼງຂ່າວໃດໜຶ່ງ, ກອງປະຊຸມຫຼືການຂຽນຂ່າວເຫດການໃດໜຶ່ງທີ່ເກີດຂຶ້ນແລະສະຖານທີ່ຕ່າງໆ.

---

[1] ຈາກບົດວັນສ້າງຕັ້ງວິທະຍຸກະຈາຍສຽງ 13 ສິງຫາ 1960,ວັກ 4.

ການສັງເກດໂດຍກົງເປັນວິທີການທີ່ໜ້າເຊື່ອຖືທີ່ສຸດໃນການເກັບກຳຂໍ້ມູນ, ທ່ານບໍ່ຈຳເປັນຕ້ອງການພະຍານຊຶ່ງອາດຈະຈື່ຈຳລາຍລະອຽດບໍ່ຖືກຕ້ອງຫຼືຈື່ບໍ່ໄດ້ໝົດ. ການສັງເກດແມ່ນວິທີທີ່ດີເພື່ອສອບຖາມຜູ້ໃດຜູ້ໜຶ່ງຈາກການສັງເກດດ້ວຍຕົນເອງທ່ານຈະຮູ້ວ່າຄຳເວົ້ານັ້ນມີມູນຄວາມຈິງຫຼືບໍ່?

ການສັງເກດໂດຍກົງຍັງຊ່ວຍໃຫ້ນັກຂ່າວເຂົ້າໃຈເຫດການ, ເລື່ອງລາວທີ່ເກີດຂຶ້ນໄດ້ດີ; ຖ້າທ່ານຂຽນກ່ຽວກັບສະຖານທີ່ໃດໜຶ່ງທ່ານຈະເຂົ້າໃຈດີຂຶ້ນຫຼັງຈາກທີ່ທ່ານໄປຢ້ຽມຢາມສະຖານທີ່ນັ້ນໆ; ຖ້າທ່ານຈະຂຽນກ່ຽວກັບນັກກິລາໃດໜຶ່ງທ່ານຈະຂຽນເລື່ອງເປັນໜ້າເຊື່ອຖືໄດ້ຫຼາຍຂຶ້ນຫຼັງຈາກທີ່ເຫັນເຂົາຫຼິ້ນກິລາ.

- **ວິທີສຳພາດຂ່າວ**

ນັກຂ່າວບໍ່ສາມາດຈະໄປຢູ່ບ່ອນທີ່ມີເຫດການເກີດຂຶ້ນໄດ້ຕະຫຼອດເວລາ, ສະນັ້ນຈະຕ້ອງລົມກັບພະຍານຫຼືບຸກຄົນທີ່ຮູ້ເຫັນເຫດການນັ້ນ. ບາງເທື່ອອາດຈະລົມນຳຜູ້ທີ່ໄດ້ຮັບເຄາະຮ້າຍຈາກອາຊະຍາກຳຫຼືຜູ້ປະສົບໄພພິບັດຫຼືບຸກຄົນທີ່ຖືກກ່າວຫາວ່າກະທຳຄວາມຜິດ. ເພື່ອໃຫ້ໄດ້ຂ່າວດີງນັກຂ່າວຕ້ອງຮູ້ວິທີຖາມຄຳຖາມທີ່ຖືກຕ້ອງດ້ວຍກິລິຍາທ່າທາງທີ່ເໝາະສົມ.

ການສຳພາດ ເປັນວິທີການສຳຄັນຢ່າງໜຶ່ງຂອງການເກັບກຳຂໍ້ມູນເພື່ອຂຽນຂ່າວ. ນັກຂ່າວຈະ ຕ້ອງທຳການສຳພາດບຸກຄົນເພື່ອໃຫ້ໄດ້ຂໍ້ມູນຄວາມຈິງ ຊຶ່ງອາດສຳພາດບຸກຄົນ ຫຼື ພາກສ່ວນທີ່ກ່ຽວຂ້ອງໂດຍກົງ ກັບເຫດການເພື່ອໃຫ້ໄດ້ລາຍລະອຽດຂອງເຫດການ ລວມທັງຄວາມເຫັນຂອງບຸກຄົນທີ່ໃຫ້ສຳພາດ ເພື່ອເອົາມາ ຂຽນເປັນຂ່າວ.

- **ການນຳໃຊ້ເອກະສານ**

ການນຳໃຊ້ເອກະສານຍາມໃດນັກຂ່າວກໍຄວນຊອກຫາຂໍ້ມູນຢູ່ໃນເອກະສານເພື່ອມາຢັ້ງຢືນຫຼືເພີ່ມເຕີມໃສ່ສິ່ງທີ່ແຫຼ່ງຂ່າວໃຫ້ມາ. ເອກະສານແມ່ນສິ່ງໃດໜຶ່ງທີ່ບັນຈຸຂໍ້ມູນຊຶ່ງອາດຂຽນຫຼືຕີພິມໄວ້, ມັນອາດເປັນເຈ້ຍແຜ່ນດຽວຫຼືຂໍ້ມູນບັນຈຸເອົາໄວ້ໃນຄອມພິວເຕີ, ເອກະສານໃບແຈ້ງຂ່າວ, ສະໝຸດໂທລະສັບ, ແຜນງົບປະມານ, ບົດລາຍງານ, ສະຖິຕິຕ່າງໆຂອງລັດຖະບານເປັນຕົ້ນ.

ຂ່າວຈະໜັກແໜ້ນແລະໜ້າເຊື່ອຖືຫຼາຍຂຶ້ນຖ້າທ່ານຍົກເອົາເອກະສານຕ່າງໆມາກ່ຽວຂ້ອງແລະສະໜັບສະໜູນປະເດັນຂ່າວ, ຖ້າມີບາງຄົນເວົ້າເຖິງຈົດໝາຍຫຼືບົດລາຍງານໃນຂະນະທີ່ໃຫ້ສຳພາດກໍ່ຈົ່ງຂໍສຳເນົາເອກະສານນັ້ນນຳ. ເມື່ອແຫຼ່ງທີ່ມາຂອງຂ່າວບໍ່ຈະແຈ້ງກໍຂໍໃຫ້ຊ່ວຍຫາເອກະສານມາສະໜັບສະໜູນຄຳກ່າວອ້າງນັ້ນນຳ.

ຈົ່ງພິສູດຄວາມຈິງຢູ່ເລື້ອຍໆ ແລະ ຈົ່ງລະວັງໃຫ້ດີເອກະສານ ອາດຈະເຮັດໃຫ້ຄົນເຂົ້າໃຈຜິດຫຼືເປັນເອກະສານທີ່ບໍ່ຖືກຕ້ອງ, ຕ້ອງພະຍາຍາມກວດສອບເບິ່ງຄວາມຖືກຕ້ອງເຊັ່ນດຽວກັບຂ່າວທີ່ພິມໄປແລ້ວຢູ່ໃນໜັງສືພິມ, ຖ້າທ່ານບໍ່ລະມັດລະວັງໃນການນຳໃຊ້ຂໍ້ມູນຂ່າວສານຈາກຂ່າວທີ່ເຄີຍຜິດມາແລ້ວໃຫ້ດີທ່ານອາດຈະເຮັດໃຫ້ຄວາມຜິດຊ້ຳຄືນແບບດຽວກັນອີກກໍເປັນໄດ້.

### 2.4. ການໂຄສະນາເຜີຍແຜ່ກົດໝາຍທາງໂທລະໂຄ່ງ

ການເຜີຍແຜ່ກົດໝາຍຜ່ານລະບົບໂທລະໂຄ່ງ ເປັນໜຶ່ງໃນບັນດາຮູບການເຜີຍແຜ່ກົດໝາຍທີ່ແທດ ເໝາະກັບສະພາບການຕົວຈິງຂອງທ້ອງຖິ່ນ, ຮາກຖານ ແລະ ໄດ້ຮັບປະສິດທິຜົນສູງສຸດ ຍ້ອນວ່າ ລະບົບໂທລະໂຄ່ງມີທ່າໄດ້ປຽບດ້ານເປົ້າໝາຍ, ຂອບເຂດ, ທັນເຫດການ ແລະ ມີຄວາມຊັດເຈນກວ່າ.

- ເປົ້າໝາຍຂອງການເຜີຍແຜ່ກົດໝາຍ ຜ່ານລະບົບໂທລະໂຄ່ງ ແມ່ນປະຊາຊົນທັງໝົດຢູ່ທ້ອງຖິ່ນ, ຮາກຖານ ບ້ານຫຼື ຂອບເຂດ ຕົວເມືອງຊົນນະບົດ, ແຕ່ທີ່ງພຽງເຖິງພູດອຍເຂດຫ່າງໄກສອກຫຼີກກໍໄດ້ຮັບຂໍ້ມູນຂ່າວສານ.

- ການເຜີຍແຜ່ກົດໝາຍຜ່ານລະບົບໂທລະໂຄ່ງ ມີຂອບເຂດຈຳກັດສະເພາະບ້ານນ້ອຍ, ບ້ານໃຫຍ່, ກຸ່ມບ້ານ, ເທດສະບານຫຼືເຂດຊຸມຊົນໃດໜຶ່ງເທົ່ານັ້ນ,ຖ້າທຽບກັບຮູບການໂຄສະນາເຜີຍແຜ່ກົດໝາຍຜ່ານພາຫະນະສື່ມວນຊົນອື່ນໆແລ້ວຮູບການໂຄສະນາເຜີຍແຜ່ກົດໝາຍທາງໂທລະໂຄ່ງມີຂອບເຂດທີ່ແຄບກວ່າ, ສະເພາະ, ເຈາະຈົງແລະຈະແຈ້ງສຳລັບເຂດຊຸມຊົນໃດໜຶ່ງເທົ່ານັ້ນ.

- ການໂຄສະນາເຜີຍແຜ່ກົດໝາຍຜ່ານລະບົບໂທລະໂຄ່ງ ແມ່ນມີລັກສະນະການໂຄສະນາທີ່ມີຈຸດສຸມ, ຈຸດເນັ້ນໜັກໃຫ້ແກ່ເປົ້າໝາຍໃນຂອບເຂດນັ້ນໄດ້ຮັບຮູ້ແລະ ຈັດຕັ້ງປະຕິບັດຕາມກົດໝາຍແລະລະບຽບການທີ່ລັດວາງອອກໃນແຕ່ລະໄລຍະຊຶ່ງເນື້ອໃນຂອງການເຜີຍແຜ່ອາດມີທັງລັກສະນະລວມແລະສະເພາະເຈາະຈົງທີ່ຕ້ອງການກະທົບຕໍ່ເປົ້າໝາຍ.

**2.5. ການໂຄສະນາເຜີຍແຜ່ກົດໝາຍຜ່ານເຄືອຂ່າຍອິນເຕີເນັດ**

ການໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການຕ່າງໆຜ່ານສື່ອິນເຕີເນັດກໍເປັນອີກຊ່ອງທາງໜຶ່ງທີ່ມີຄວາມສຳຄັນ ແລະ ສ້າງຄວາມສະດວກສະບາຍໃຫ້ແກ່ຜູ້ຊົມໃຊ້ ເນື່ອງຈາກວ່າໃນສັງຄົມປັດຈຸບັນ ໄດ້ຫັນມານຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການຕິດຕໍ່ພົວພັນ, ສື່ສານຊຶ່ງກັນ ແລະ ກັນ ໂດຍຜ່ານລະບົບອິນເຕີເນັດນັບມື້ນັບ ຫຼາຍຂຶ້ນເປັນຕົ້ນ ອີເມວ, ວອດແອັບ, ເຟດບຸກ, ໄລ ແລະ ອື່ນໆ. ນອກຈາກນີ້, ຍັງມີການໂຄສະນາຕ່າງໆກໍໄດ້ຜ່ານເຊັ່ນດຽວກັນ ເຊັ່ນ ການໂຄສະນາສິນຄ້າຕ່າງໆ, ການລົງບົດຂ່າວ, ການໂຄສະນາລະບຽບການ ແລະ ອື່ນໆ. ສະນັ້ນ, ກະຊວງຍຸຕິທຳໃນຖານະເປັນເສນາທິການໃຫ້ແກ່ລັດຖະບານໃນການສ້າງ ແລະ ປັບປຸງນິຕິກຳ ກໍໄດ້ສ້າງສື່ທາງເອເລັກໂຕຣນິກຂຶ້ນມາໂດຍຜ່ານທາງອິນເຕີເນັດ ເຊັ່ນ ໄດ້ສ້າງເປັນເວັບໄຊ ແລະ ແອັບພລີເຄຊັນກົດໝາຍລາວເທິງມືຖືເພື່ອໃຫ້ປະຊາຊົນບັນດາເຜົ່າສາມາດເຂົ້າເຖິງຂໍ້ມູນທາງດ້ານກົດໝາຍໄດ້ສະດວກຫຼາຍຂຶ້ນກວ່າທີ່ ຜ່ານມາ ຊຶ່ງຊ່ອງທາງນີ້ ແມ່ນສາມາດໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການໄດ້ຢ່າງທົ່ວເຖິງ, ວ່ອງໄວ ແລະ ມີປະສິດທິຜົນດີກວ່າສື່ອື່ນ.

**2.6. ເວັບໄຊກະຊວງຍຸຕິທຳ**

ເວັບໄຊກະຊວງຍຸຕິທຳ ແມ່ນແຫຼ່ງເກັບໂຮມຂໍ້ມູນ ຂ່າວສານ ແລະ ເອກະສານລັດຖະການຂອງຂະແໜງ ການຍຸຕິທຳທີ່ເປັນຮູບແບບເອເລັກໂຕຣນິກໃນລະບົບອິນເຕີເນັດ ແລະ ມີຊື່ວ່າ “ເວັບໄຊກະຊວງຍຸຕິທຳ”ພາຍໃຕ້ ຊື່ລະຫັດວ່າ www.moj.gov.la ຊຶ່ງເປັນບ່ອນຈັດພິມເຜີຍແຜ່ບັນດາຂໍ້ມູນຂ່າວສານ ແລະ ເອກະສານລັດຖະ ການຂອງຂະແໜງການຍຸຕິທຳ ໃຫ້ສັງຄົມໄດ້ຮັບຮູ້.

**1) ເນື້ອໃນທີ່ຈັດພິມລົງເວັບໄຊກະຊວງຍຸຕິທຳ**

- ບັນດານິຕິກຳ ຂອງຂະແໜງການຍຸຕິທຳ;
- ຮ່າງນິຕິກຳ ແລະ ບົດປະເມີນຜົນກະທົບຂອງຮ່າງນິຕິກຳຂອງຂະແໜງການຍຸຕິທຳ;
- ບົດຂ່າວ ແລະ ຮູບພາບການເຄື່ອນໄຫວຂອງກະຊວງ ແລະ ພະແນກຍຸຕິທຳທ້ອງຖິ່ນ;

- ປະຫວັດກະຊວງຍຸຕິທຳ, ແຜນຍຸດທະສາດການພັດທະນາ ແລະ ວິໄສທັດຂອງຂະແໜງການຍຸຕິທຳ;

- ໂຄງຮ່າງການຈັດຕັ້ງ, ພາລະບົດບາດ, ແຜນວຽກປະຈຳປີ, ສະຖິຕິວຽກງານຕ່າງໆຂອງຂະແໜງ ການຍຸຕິທຳ;

- ຜະລິດຕະພັນສື່ມວນຊົນ ເປັນຕົ້ນ ວາລະສານ, ໜັງສືພິມ, ຈົດໝາຍຂ່າວ, ລາຍການກົດໝາຍທາງວິທະຍຸກະຈາຍສຽງ, ລາຍການໂທລະພາບ, ຊີດີ, ວີຊີດີ, ດີວີດີ, ລະຄອນກົດໝາຍ, ສະປອດ ໂຄສະນາ.

**2) ການນຳໃຊ້ເວັບໄຊກະຊວງ**

ການເຂົ້ານຳໃຊ້ເວັບໄຊ ກະຊວງຍຸຕິທຳ ປະຕິບັດຂັ້ນຕອນ ດັ່ງນີ້:

- ເຂົ້າເວັບໄຊຜ່ານ Browser(Google, chrome, Firefox)

- ຊື່ລະຫັດ ຫຼື ໂດເມນຂອງເວັບໄຊແມ່ນ www.moj.gov.la

**3) ບາດກ້າວການສ້າງ ແລະ ບຳລຸງຮັກສາຄໍລຳ**

- **ບາດກ້າວການສ້າງຄໍລຳ**

ໃນຫຼາຍປີຜ່ານມາຂະແໜງການຍຸຕິທຳ ແລະ ຖະແຫຼງຂ່າວ, ວັດຖະນະທຳ ແລະ ທ່ອງທ່ຽວ ໄດ້ ສົມທົບກັບບັນດາອົງການອື່ນໆສ້າງຄໍລຳ, ເນື້ອໃນຂ່າວກົດໝາຍໃນໜ້າໜັງສືພິມ, ວິທະຍຸ ເພື່ອຊ່ວຍໃຫ້ພະນັກງານ, ປະຊາຊົນຮັບຮູ້ໄດ້, ກຳໄດ້ ແລະ ຊອກຮູ້ກົດໝາຍ, ຕື່ນຕົວເຄົາລົບກົດໝາຍ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ດ້ານອື່ນກໍ່ເພື່ອກວດກາ, ຕິດຕາມການນຳເອົາກົດໝາຍເຂົ້າສູ່ຊີວິດປະຈຳວັນ.

ຄໍລຳຂ່າວມີລັກສະນະໝັ້ນຄົງຍາວນານ, ສ່ວນໜ້ານຳສະເໜີ ເຖິງວ່າມີຈຸດກຳນົດເວລາທີ່ແນ່ນອນແຕ່ສ່ອງແສງໄດ້ທຸກມູມໃນຂົງເຂດກົດໝາຍ, ເຂົ້າເລິກເຖິງການໂຄສະນາເປັນລາຍລັກອັກສອນ. ເພື່ອເຮັດໃຫ້ບັນດາຄໍລຳຂ່າວສະເພາະໃນໜັງສືພິມ, ວິທະຍຸ ມີຄວາມໝັ້ນຄົງ, ມີລວງເລິກ, ເສີມຂະຫຍາຍປະສິດທິຜົນນັ້ນການ ສ້າງ ແລະ ຮັກສາຄໍລຳຂ່າວສະເພາະຕ້ອງດຳເນີນໄປ ແຕ່ລະບາດກ້າວຕົວຈິງ ດັ່ງນີ້:

ສ້າງມະຕິຕົກລົງ, ແຜນການຮ່ວມລະຫວ່າງກະຊວງຍຸຕິທຳ ກັບ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວປັນເງື່ອນໄຂທຳອິດ, ເປັນພື້ນຖານນິຕິກຳໃຫ້ແກ່ການສ້າງຄໍລຳຂ່າວສະເພາະບົນພື້ນຖານແນວທາງຂອງພັກ, ນິຕິກຳຂອງລັດ ວ່າດ້ວຍວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍ, ເລີ່ມຈາກ ຄວາມຕ້ອງການໃນ ການດຳລົງຊີວິດ ແມ່ນກົດໝາຍຕ້ອງໄດ້ຮັບການເຜີຍແຜ່ຢ່າງກວ້າງຂວາງ, ທົ່ວເຖິງທຸກຊັ້ນຄົນ; ຂະແໜງການຍຸ ຕິທຳຕ້ອງເປັນເຈົ້າການສະເໜີ, ເປັນເສນາໃຫ້ການນຳແຕ່ລະຂັ້ນໃນການສ້າງນິຕິກຳ ແລະ ແຜນການຮ່ວມລະຫວ່າງກະຊວງ, ອົງການຕ່າງໆ ທີ່ກ່ຽວຂ້ອງເພື່ອເປີດໜ້າຂ່າວສະເພາະ, ຄໍລຳຂ່າວສະເພາະໃນໜັງສືພິມ, ວິທະຍຸ, ໂທລະພາບ, ໂທລະໂຄ່ງ ແລະ ສື່ອື່ນ.

- **ຈຸດປະສົງຂອງຄໍລຳ:**

- ປະກອບສ່ວນເພີ່ມທະວີການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ;

- ຍົກສູງຄວາມເຂົ້າໃຈກ່ຽວກັບກົດໝາຍ ແລະ ລະດັບວັດທະນະທຳກົດໝາຍໃຫ້ແກ່ພະນັກງານ, ປະຊາຊົນ ເພື່ອເຮັດໃຫ້ທຸກຄົນຮັບຮູ້ ແລະ ປະຕິບັດຖືກຕ້ອງຕາມກົດໝາຍ;

- ຢືນຢັນທີ່ຕັ້ງ, ບົດບາດຂອງວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍ, ຄວາມຈຳເປັນ ແລະ ປະສິດທິຜົນ ຂອງພາຫະນະສື່ມວນຊົນໃນການເຄື່ອນໄຫວເຜີຍແຜ່, ສຶກສາອົບຮົມກົດໝາຍ.

- **ຄວາມຕ້ອງການຄຳລຳ:** ຕ້ອງຮັບປະກັນຄວາມແມ່ນຢຳດ້ານເນື້ອໃນ, ຮູບການຢ່າງອຸດົມສົມບູນ, ສັ້ນກະທັດ ຮັດ, ເຂົ້າໃຈງ່າຍ, ມີການໂຄສະນາ, ເຜີຍແຜ່, ສຶກສາອົບຮົມກົດໝາຍ ແລະ ເຂົ້າສູ່ຊີວິດການເປັນຢູ່ງ່າຍ.

- **ເນື້ອໃນຂອງຄຳລຳ:**ນີ້ເປັນພາກສ່ວນພື້ນຖານ, ສຳຄັນທີ່ສຸດຂອງນິຕິກຳ ແລະແຜນການຮ່ວມ ລະຫວ່າງ ກະຊວງທີ່ກ່ຽວຂ້ອງ ຊຶ່ງຂຶ້ນກັບຄວາມຮຽກຮ້ອງຕ້ອງການກັບແຕ່ລະໄລຍະ, ຈຸດພິເສດຂອງແຕ່ລະຮູບ ແບບ ແລະ ເປົ້າໝາຍ. ເນື້ອໃນຂອງຄຳລຳຕົ້ນຕໍສຸມໃສ່ບັນຫາ ດັ່ງນີ້:

- ເຜີຍແຜ່, ແນະນຳແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດໃຫ້ເຂົ້າເຖິງພະນັກ ງານແລະປະຊາຊົນ ໂດຍສະເພາະ ແມ່ນເອກະສານນິຕິກຳທີ່ກ່ຽວຂ້ອງ ໂດຍກົງເຖິງຊີວິດການເປັນຢູ່ປະຈຳວັນ ຂອງ ປະຊາຊົນເຊັ່ນ ລັດຖະທຳມະນູນ, ປະມວນກົດໝາຍອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ປະມວນກົດ ໝາຍແພ່ງ, ການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍຄອບຄົວ; ກົດໝ າຍວ່າດ້ວຍຢາເສບຕິດ, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ກົດໝາຍວ່າດ້ວຍຄ່າທຳນຽມສານແລະບັນດາ ນິຕິກຳໃຕ້ກົດໝາຍ ເປັນຕົ້ນນະໂຍບາຍຂອງລັດຕໍ່ກັບຜູ້ທີ່ມີຄຸນງາມຄວາມດີຕໍ່ການປະຕິວັດ, ຜູ້ທີ່ມີຜົນງານໃນການ ພັດທະນາເສດຖະກິດ;

- ສິ່ງຂ່າວ, ສ່ອງແສງການເຄື່ອນໄຫວຂອງບັນດາອົງການລັດໃນການສ້າງ, ປະຕິບັດ ແລະ ປົກປ້ອງ ກົດໝາຍ ໂດຍສະເພາະ ແມ່ນການເຄື່ອນໄຫວຂອງຂະແໜງການຍຸຕິທຳ ໃນຂົງເຂດການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າໃຫ້ແກ່ຄົນທຸກຍາກ ແລະ ເປົ້າໝາຍນະໂຍບາຍ, ກ່ຽວກັບສັນຊາດ, ທະນາຍຄວາມ, ທີ່ປຶກສາກົດໝາຍ;

- ຂໍ້ສະເໜີຂອງຜູ້ອ່ານຕໍ່ບັນດາອົງການລັດຜ່ານສື່ກ່ຽວກັບພຶດຕິກຳຂອງພະນັກງານ, ການຈັດຕັ້ງປະຕິບັດກົດ ໝາຍຂອງອົງການອຳນາດລັດ ເພື່ອປັບປຸງ, ແກ້ໄຂທັດສະນະຄະຕິຂອງພະນັກງານປົກປ້ອງກົດໝາຍ, ເພີ່ມທະວີ ຄວາມສັກສິດຂອງກົດໝາຍໃຫ້ຫຼາຍຂຶ້ນ.

- ເລື່ອງຈິງທີ່ເກີດຂຶ້ນໃນຊີວິດການເປັນຢູ່ປະຈຳວັນ, ຊ່ວຍປະຊາຊົນໄຂຂໍ້ຂ້ອງໃຈຂອງເຂົາເຈົ້າ ບົນ ພື້ນຖານຂໍ້ກຳນົດຂອງກົດໝາຍ.

- **ຮູບການຂອງຄຳລຳ**

- ໜັງສືພິມຮູບພາບ (ໂທລະພາບ): ສາມາດນຳໃຊ້ໜຶ່ງໃນບັນດາຮູບການດັ່ງນີ້: ຂ່າວ, ພົບປະສອງຝ່າຍ, ສຳພາດ, ສົນທະນາ, ບັນທຶກໄວ, ກ້ອງສ່ອງນັກຂ່າວ;

- ໜັງສືພິມເວົ້າ (ວິທະຍຸກະຈາຍສຽງ): ຂ່າວ, ວຽກດີ-ຄົນເດັ່ນ, ຕອບຄຳຮ້ອງຂໍຜູ້ອ່ານ, ຕິດຕາມຜູ້ຟັງ,ບົດປະພັນ ແລະ ອື່ນໆ;

- ໜັງສືພິມຂຽນ (ໜັງສືພິມເຈ້ຍ): ຂ່າວ, ແນະນຳ, ຕອບກົດໝາຍ, ຊອກຮູ້ກົດໝາຍ.

- **ມາດຕະການປະຕິບັດ**

ແບ່ງໜ້າທີ່ຄວາມຮັບຜິດຊອບຂອງບັນດາອົງການທີ່ປະສານສົມທົບປະຕິບັດຄຳລຳ (ຄວາມຮັບຜິດ ຊອບຂອງອົງການຕຸລາການ, ສື່ມວນຊົນ, ສຶກສາ, ຕຳຫຼວດ, ຄະນະຊາວໜຸ່ມ...) ແຜນການຮ່ວມກະຊວງ ຕ້ອງ ຍົກຂຶ້ນມາປຶກສາຫາລືເປັນເອກະພາບລະຫວ່າງບັນດາອົງການ, ຈາກນັ້ນການນຳຂອງບັນດາອົງການ ພ້ອມກັນ ເຊັນ ແລະ ປະກາດໃຊ້, ກຳນົດຂອບເຂດຂອງບັນດາໜ້າຂ່າວ, ຄຳລຳຂ່າວກົດໝາຍໃນໜັງສືພິມເຈ້ຍ, ປະລິມານ ໃນວິທະຍຸກະຈາຍສຽງ, ໂທລະພາບ...

ຂອບເຂດ ແລະ ປະລິມານອອກອາກາດຂອງຈຳນວນໜ້າຂ່າວສະເພາະກົດໝາຍ ແຕກຕ່າງກັບ ຂອບເຂດ ແລະ ປະລິມານອອກອາກາດຂອງຄຳລຳສະເພາະ, ຄຳລຳກົດໝາຍມີລັກສະນະໝັ້ນຄົງ, ສ່ວນຈຳນວນໜ້າຂ່າວສະເພາະແມ່ນຈຳນວນໜັງສືພິມໃນນັ້ນມີທັງປະໄວ້ສະເພາະໃຫ້ໜ້າໜັງສືພິມເຈ້ຍກ່ຽວກັບກົດໝາຍ ຫຼື ວິທະຍຸກະຈາຍສຽງ, ໂທລະພາບ ສ້າງເປັນຫຼາຍລາຍການອອກອາກາດເປັນປະຈຳ, ຕໍ່ເນື່ອງກ່ຽວກັບເນື້ອໃນຂອງກົດໝາຍໃດໜຶ່ງ ຫຼື ມາດຕາໃດໜຶ່ງ ເພື່ອຂະຫຍາຍຄວາມໃຫ້ຈະແຈ້ງ, ອ່ານ ຫຼື ຟັງແລ້ວ ເຂົ້າໃຈເຖິງຄວາມໝາຍທີ່ຕ້ອງການສື່. ຕາມປົກກະຕິ, ຈຳນວນໜ້າຂ່າວ ແມ່ນສຸມໃສ່ໂຄສະນາຮັບໃຊ້ວຽກງານການເມືອງ, ນິຕິກຳຂອງສູນກາງ, ຂອງທ້ອງຖິ່ນ, ໂຄສະນາ, ເຜີຍແຜ່ຢ່າງເລິກເຊິ່ງ, ກວ້າງຂວາງບັນດາກົດໝາຍທີ່ກ່ຽວຂ້ອງກັບທຸກດ້ານ ຂອງຊີວິດການເປັນຢູ່ສັງຄົມ ເຊັ່ນ ລັດຖະທຳມະນູນ, ປະມວນກົດໝາຍແພ່ງ, ປະມວນກົດໝາຍອາຍາ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍແຮງງານຫຼື ອອກໜ້າຂ່າວສະເພາະການຜັນຂະຫຍາຍບັນດາແຜນງານແຫ່ງຊາດ ກ່ຽວກັບ ຄວາມປອດໄພທາງຄົມມະນາຄົມ, ກ່ຽວກັບການຕ້ານ, ປ້ອງກັນອາຊະຍາກຳ.

- **ການກຳນົດຂອບເຂດຂອງສື່**

ຂ່າວສະເພາະໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບ ດຳເນີນຕາມບາດກ້າວ ດັ່ງນີ້:

ເລືອກປະເພດໜັງສືພິມ ເພື່ອອອກຈຳນວນໜ້າຂ່າວສະເພາະໃຫ້ແທດເໝາະກັບເປົ້າໝາຍຜູ້ອ່ານ, ຕາມປົກກະຕິຈຳນວນໜ້າຂ່າວສະເພາະໄດ້ປະຕິບັດຢ່າງແທດເໝາະກັບທັງໜັງສືພິມເຈ້ຍ, ວິທະຍຸ, ໂທລະພາບ. ເຖິງຢ່າງໃດກໍຕາມ, ເປົ້າໝາຍໜັງສືພິມເຈ້ຍກໍຄວນເລືອກໜັງສືພິມທີ່ມີເປົ້າໝາຍຜູ້ອ່ານຈຳນວນຫຼາຍ ຫຼື ໜັງສືພິມວິຊາການ.

- ກຳນົດຂອບເຂດໜ້າໜັງສືພິມ:

+ ໜັງສືພິມເຈ້ຍ: ຈັດໜ້າໜຶ່ງສະເພາະ ຫຼື ອອກເປັນວາລະສານ ສະບັບສະເພາະ;

+ ວິທະຍຸ: ກຳນົດເວລາອອກອາກາດ 30 ນາທີ (ທັງເນື້ອໃນ ແລະ ໂຄສະນາ);

+ ໂທລະພາບ: 15 ນາທີ ເຖິງ 20 ນາທີ.

- **ກຳນົດເນື້ອໃນຈຳນວນໜ້າສະເພາະ:** ເລືອກບັນຫາເພື່ອນຳສະເໜີ ຊຶ່ງບັນຫາດັ່ງກ່າວ ຕ້ອງມີລັກສະ ນະສະພາບການ, ທາງສຽງສັງຄົມສົນໃຈ, ຮັບໃຊ້ໜ້າທີ່ການເມືອງ, ເສດຖະກິດ-ສັງຄົມຂອງສູນກາງ ແລະ ທ້ອງ ຖິ່ນຢ່າງທັນການ.

- **ກຳນົດຮູບການນຳສະເໜີ:** ເນື່ອງຈາກຂອບເຂດຈຳນວນໜ້າໜັງສືພິມ ແລະ ກຳນົດເວລາອອກ ອາກາດຂ່າວຍາວພໍສົມຄວນ, ສະນັ້ນ ຕ້ອງຊອກຮູບການນຳສະເໜີຢ່າງມີຊີວິດຊີວາ, ສ້າງແຮງຈູງໃຈ, ດຶງດູດຜູ້ອ່ານ. ບົດຮຽນຂອງບາງໜັງສືພິມ, ວິທະຍຸສູນກາງ ແລະ ທ້ອງຖິ່ນ ເມື່ອດຳເນີນການອອກຂ່າວກົດໝາຍປົກກະຕິ ຈະນຳໃຊ້ເວລາ  ແລະ ຮູບການໃນໜ້າໜັງສືພິມຄື: ຂ່າວການເຄື່ອນໄຫວ, ບົດສຳພາດ 1 ບົດ, ບົດຂ່າວສັ້ນ 1 ຂ່າວ, ວຽກດີ-ຄົນເດັ່ນ 1 ຂ່າວ, ຊວນຫົວ, ບົດປະພັນ, ສັບປົນກັບຮູບພາບປະກອບ (ສຳລັບ ໜັງສືພິມເຈ້ຍ) ຫຼື ໂຄສະນາ, ບົດເພງ (ສຳລັບວິທະຍຸ, ໂທລະພາບ) ຕິດພັນກັບເນື້ອໃນຂ່າວ, ສ້າງຄວາມປະທັບໃຈແກ່ຜູ້ອ່ານ, ສ້າງ ປະສິດທິຜົນສູງໃຫ້ແກ່ການໂຄສະນາເຜີຍແຜ່, ສຶກສາອົບຮົມກົດໝາຍ.

- **ກຳນົດຂອບເຂດຄຳລຳໃນໜັງສືພິມເຈ້ຍ ແລະ ກຳນົດເວລາອອກອາກາດໃນວິທະຍຸ, ໂທລະພາບ:** ການກຳນົດຂອບເຂດຄຳລຳຕ້ອງມີໄຫວພິບ ໂດຍຂຶ້ນກັບຄວາມຕ້ອງການຂອງການໂຄສະນາ, ເຜີຍແຜ່ຂອງຄຳລຳ, ຂອບເຂດຂອງແຕ່ລະໜັງສືພິມ, ແຕ່ລະລາຍການ ຊຶ່ງປົກກະຕິແລ້ວມີການກຳນົດຂອບເຂດ ດັ່ງນີ້:

- ສຳລັບໜັງສືພິມເຈ້ຍ: ປະມານ1/4ຂອງໜ້າໜັງສືພິມ;
- ສຳລັບວິທະຍຸ, ໂທລະພາບ: ຖ້າຫາກອອກອາກາດຄຳລຳກົດໝາຍໃນລາຍການຄວາມຮູ້ທາງດ້ານກົດໝາຍ ແລະ ລາຍການເພື່ອສັງຄົມຍຸຕິທຳກຳນົດເວລາອອກອາກາດແມ່ນ 30 ນາທີ, ຫົວລາຍການ 1-2 ນາທີ, ລົມຂ່າວອອກອາກາດແມ່ນ 5-10ນາທີ,  ຕອບຄຳຖາມຜູ້ຟັງ ຫຼື ຕອບຄຳຖາມ ຜູ້ຊົມທາງໂທລະພາບແມ່ນ 10 ນາທີ ແລະ ສຳພາດ ຫຼື ສົນທະນາກົດໝາຍ 10 ນາທີ.

**4) ວິທີຕັ້ງຫົວຂໍ້ (ຊື່ເອີ້ນ) ຂອງບົດໜັງສືພິມ**

ຫົວຂໍ້ຂອງບົດໜັງສືພິມບໍ່ພຽງແຕ່ເປັນການໄຈ້ແຍກບົດນີ້ກັບບົດອື່ນເທົ່ານັ້ນ, ແຕ່ມັນຍັງເປັນ ການສະແດງເຖິງເນື້ອໃນໂດຍຫຍໍ້. ຍ້ອນແນວນັ້ນ, ນັກຂ່າວທີ່ມີຊື່ສຽງເຄີຍກ່າວໄວ້ວ່າ "ຫົວຂໍ້ເປັນຈິດວິນຍານ ຂອງຂ່າວ, ບົດ". ດ້ວຍເຫດນີ້, ຈຶ່ງຈຳເປັນອ່ານຫົວຂໍ້ກໍເຂົ້າໃຈເຖິງເນື້ອໃນຕົ້ນຕໍຂອງບົດຂຽນ. ຢາກມີຫົວຂໍ້ມ່ວນ, ດຶງດູດຜູ້ອ່ານ, ກ່ອນຈະຂຽນຕ້ອງຢືນຢັນຈະແຈ້ງຫົວຂໍ້ແນວຄິດ ແລະ ເນື້ອໃນຢ່າງຊັດເຈນ ຢາກເຮັດໄດ້ຄືແນວ ນັ້ນ, ຜູ້ຂຽນຕ້ອງຕິດຕາມທຸກດ້ານຂອງການປະຕິບັດກົດໝາຍ.

- **ການຕັ້ງຫົວຂໍ້ບົດໜັງສືພິມ ມີ 3 ວິທີຄື:**

**ໜຶ່ງ**: ນຳໃຊ້ຄວາມລະອຽດ, ຂໍ້ມູນຕົວເລກທີ່ໜ້າສົນໃຈທີ່ສຸດ, ວິທີນີ້ສາມາດເອົາຄວາມລະອຽດພົ້ນ ເດັ່ນ ຫຼື ຂໍ້ມູນຕົວເລກທີ່ໜ້າສົນໃຈຂອງເນື້ອໃນຂ່າວ, ບົດມາເປັນຫົວຂໍ້;

**ສອງ:** ຫົວຂໍ້ຖືກຕັ້ງມາຈາກເນື້ອໃນຕົ້ນຕໍທີ່ສຸດ, ແຕ່ລະບົດໜັງສືພິມມີຫຼາຍເນື້ອໃນ ແລະ ຄວາມໝາຍ ຕ່າງ ກັນ ຈາກເນື້ອໃນດັ່ງກ່າວ ສາມາດຖອດບັນຫາສຳຄັນອອກມາ ເພື່ອຕັ້ງເປັນຫົວຂໍ້ບົດ;

**ສາມ:** ສົມທົບທັງສອງວິທີຂ້າງເທິງລວມເຂົ້າກັນ, ເວລາຕັ້ງຫົວຂໍ້ບົດ ນັກຂ່າວຄວນເອົາໃຈໃສ່:

- ບໍ່ຕັ້ງຫົວຂໍ້ແບບລັກສະນະດູຖູກ, ດູໝິ່ນ;

- ບໍ່ໃຊ້ຄຳສັບດຽວຊ້ຳໄປຊ້ຳມາຫຼາຍຄັ້ງ;

- ຫຼີກລ່ຽງການຕັ້ງຫົວຂໍ້ແບບດອກໄມ້;

- ບໍ່ຕັ້ງຫົວຂໍ້ແບບຢອກຫຼິ້ນ;

- ບໍ່ໃຊ້ປະໂຫຍກສັບສົນ, ສິງໄສ ຊຶ່ງອາດເຮັດໃຫ້ຜູ້ອ່ານເຂົ້າໃຈຜິດ.

**3. ສິ່ງທີ່ຕ້ອງເອົາໃຈໃສ່ໃນວຽກງານໂຄສະນາເຜີຍແຜ່ກົດໝາຍຜ່ານສື່**

- ກໍ່ສ້າງ ແລະ ບຳລຸງຍົກລະດັບພະນັກງານ, ນັກຂ່າວ, ນັກບັນນາທິການ:

+ ກໍ່ສ້າງບຳລຸງບັນນາທິການມີໜ້າທີ່ສຳຄັນ ແນໃສ່ບຳລຸງຮັກສາ, ຍົກສູງຄຸນນະພາບຄຳລຳ ເພື່ອຮັບປະກັນເນື້ອ ໃນຂອງຄຳລຳ, ຕ້ອງກໍ່ສ້າງຖັນແຖວນັກຂ່າວ, ນັກບັນນາທິການທີ່ໜັກແໜ້ນດ້ານວິຊາການ, ມີຄຸນສົມບັດດີ ແລະ ລະບົບປະສານງານກັບນັກຂ່າວຢ່າງໜັ້ນຄົງ;

+ ການກໍ່ສ້າງຖັນແຖວນັກຂ່າວຮັບຜິດຊອບສະເພາະຂຽນຂ່າວກ່ຽວກັບກົດໝາຍ: ຂຽນໂຄງການ ກົດ ໝາຍ "ທັງຍາກ, ທັງແຫ້ງ", ທັງຮຽກຮ້ອງຕ້ອງແມ້ນຢໍາ. ຕໍ່ກັບຂອບເຂດໜ້າໜັງສືພິມ ແລະ ກຳນົດເວລາ ອອກ ອາກາດ, ຕາຕະລາງອອກອາກາດໄດ້ຖືກກຳນົດໄວ້ກ່ອນນັ້ນ, ກ່ອນອື່ນໝົດວິທະຍຸ ຕ້ອງມີຖັນແຖວນັກຂ່າວ ຮັບຜິດຊອບສະເພາະຂຽນຂ່າວກ່ຽວກັບກົດໝາຍ, ເມື່ອມີຄວາມຕ້ອງການຄືແນວນັ້ນການຄັດເລືອກຮັບເອົາຜູ້ທີ່ ຈົບ ການສຶກສາກົດໝາຍເຂົ້າມາເປັນນັກຂ່າວ, ນັກບັນນາທິການ, ວິທະຍຸ, ຍັງຕ້ອງສ້າງເງື່ອນໄຂໃຫ້ນັກຂ່າວ ໄດ້ໄປສຶກ ສາກົດໝາຍລະບົບພິເສດ ແລະ ຍົກລະດັບວິຊາການ;

+ ພົວພັນ ຮ່ວມມືຢ່າງແໜ້ນແຟ້ນກັບຖັນແຖວພະນັກງານ-ລັດຖະກອນ ທີ່ເປັນນັກກົດໝາຍ ທີ່ເຄີຍ ແລະ ກຳລັງເຮັດວຽກຢູ່ ຕາມບັນດາອົງການຕຳຫຼວດ, ສານ, ອົງການໄອຍະການ, ໂຮງຮຽນ ແລະ ສະຖາບັນຄົ້ນຄວ້າກ່ຽວ ກັບກົດໝາຍ;

+ ຊອກແຫຼ່ງພາລະກອນຈາກບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ໃນທຸກຂົງເຂດເສດຖະກິດ, ວັດທະນະທຳ, ສັງຄົມ, ການສຶກສາ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເພື່ອຂຽນຂ່າວກ່ຽວກັບກົດໝາຍໃນ

ແງ່ມູມຂອງນັກເສດຖະສາດ-ສັງຄົມ ຈະເຮັດໃຫ້ບົດຂຽນມີຄວາມອຸດົມສົມບູນ, ດຶງດູດຈິດໃຈ, ຮັບປະກັນຄວາມ ຖືກຕ້ອງ, ໜ້າເຊື່ອຖືກ່ຽວກັບຂົງເຂດທີ່ເຂົາເຈົ້າກຳລັງເຮັດວຽກຢູ່ນັ້ນ;

- ບັນດາມາດຕະການເພື່ອຮັກສາ, ເປີດກວ້າງ, ຍົກສູງປະສິດທິພາບຖັນແຖວນັກຂ່າວ, ນັກບັນນາທິການ ມີດັ່ງນີ້:

+ ຈັດຕັ້ງກອງປະຊຸມຫົວຂໍ້ຍ່ອຍ, ກອງປະຊຸມຝຶກອົບຮົມວິທະຍາກອນກົດໝາຍ, ຫ້ອງຮຽນບຳລຸງ ຄວາມຮູ້ກົດໝາຍໄລຍະສັ້ນ, ຕາມຫົວຂໍ້ຍ່ອຍ ແນໃສ່ຍົກລະດັບວິຊາການຄວາມຮູ້ກ່ຽວກັບກົດໝາຍໃຫ້ແກ່ນັກ ຂ່າວ, ນັກບັນນາທິການ, ພາລະກອນ. ກອງປະຊຸມນີ້ຈັດໂດຍຂະແໜງການຍຸຕິທຳສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

+ຈັດຕັ້ງການແຂ່ງຂັນຂຽນຂ່າວກ່ຽວກັບກົດໝາຍ, ນີ້ເປັນຮູບການແນໃສ່ການຄົ້ນຫາ, ເປີດກວ້າງ ລະບົບຄວາມຮັບຮູ້ໃຫ້ແກ່ນັກຂ່າວ;

+ ມີລະບອບນະໂຍບາຍຄ່າຂຽນທີ່ເໝາະສົມ, ຍ້ອງຍໍຊົມເຊີຍຢ່າງທັນການແກ່ໝູ່ຄະນະ, ນັກຂ່າວ, ນັກບັນນາທິການທີ່ມີຫຼາຍບົດຂຽນຄຸນນະພາບສູງ ຫຼື ມີຜົນງານດີເດັ່ນໃນວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍໃນຄຳລຳ.

## References:


1. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
2. ປຶ້ມໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2022;
3. ບົດວັນສ້າງຕັ້ງວິທະຍຸກະຈາຍສຽງ 13 ສິງຫາ 1960.